# ເຄັດລັບໃນການ ສ້າງວິດີໂອອອນລາຍ

ເພື່ອເພີ່ມຄວາມຮູ້ກ່ຽວກັບດ້ານສະພາບອາກາດ ແລະ ສິ່ງແວດລ້ອມ



# ວິດີໂອສາມາດດຶງຄວາມສົນໃຈໄດ້ດີກວ່າ ເນື້ອໃນປະເພດອື່ນ. ໃຊ້ວິດີໂອເພື່ອເພີ່ມຄວາມຮັບຮູ້ທັນກ່ຽວກັບບັນຫາສິ່ງແວດລ້ອມໃນ ສປປ ລາວ.




ວິດີໂອສັ້ນໆກ່ຽວກັບການປ່ຽນແປງສະພາບອາກາດ ແລະ ສິ່ງແວດລ້ອມສາມາດສົ່ງເສີມໃຫ້ຄົນເຮົາລົງມືປົກປ້ອງໂລກຂອງເຮົາໄດ້.

ຄູ່ມືນີ້ຈະໃຫ້ເຄັດລັບງ່າຍໆໃນການສ້າງວິດີໂອທີ່ໜ້າສົນໃຈດຶງດູດຜູ້ເບິ່ງ ແລະ ສົ່ງຂໍ້ຄວາມສຳຄັນໄດ້ຢ່າງມີປະສິດທິພາບໃນວິທີທີ່ສ້າງສັນ ແລະ ໜ້າສົນໃຈ



# ເຕັກນິກການຖ່າຍວິດີໂອທີ່ດີ 1

**ໃຫ້ວິດີໂອສັ້ນ ແລະ ເນັ້ນຈຸດ ໃຈຄວາມສຳຄັນ**

ສຳລັບຜູ້ໃຊ້ຄົນລຸ້ນໃໝ່, ວິດີໂອສັ້ນເປັນຕົວເລືອກທີ່ດີກວ່າ. ພະຍາຍາມເຮັດໃຫ້ສັ້ນປະມານ 30-60 ວິນາທີສຳລັບ TikTok, Instagram Reels ແລະ YouTube Shorts.

ມີຫົວຂໍ້ສຳຄັນພຽງໜຶ່ງຢ່າງຕໍ່ວິດີໂອ
ເຊັ່ນ “ຜົນກະທົບຂອງພລາສະຕິກຕໍ່ທະເລ”
ຫຼື “ວິທີຫລຸດປະລິມານຄາບອນ”




*Credit: @Ecosocialcommunity*

# ເຕັກນິກການຖ່າຍວິດີໂອທີ່ດີ

2

**ດຶງຄວາມສົນໃຈທັນທີ**

ຜູ້ຄົນມີໄລຍະເວລາໃນການໃຫ້ຄວາມສົນໃຈສັ້ນ.
ດຶງຄວາມສົນໃຈໃຫ້ໄດ້ໃນ 3 ວິນາທີທຳອິດ!

ເຈົ້າສາມາດເຮັດໄດ້ໂດຍ:

- ຖາມຄຳຖາມ: "ເປັນຫຍັງເມືອງຕ້ອງການພື້ນທີ່ສີຂຽວ?"
- ຂໍ້ແທ້ຈິງທີ່ໜ້າຕົກໃຈ: "ເຮົາສູນເສຍອາຫານ 1.3 ພັນລ້ານໂຕນຕໍ່ປີ!"
- ສ້າງສິ່ງທ້າທາຍ: "ພາລະກິດທ້າທາຍໜຶ່ງອາທິດສີຂຽວ!"



*Credit: @VoloFoundation*

# ເຕັກນິກການຖ່າຍວິດີໂອທີ່ດີ

3

## ໃຊ້ພາສາທີ່ງ່າຍຕໍ່ຄວາມເຂົ້າໃຈ



- ຫລີກເວັ້ນຄໍາທີ່ສັບຊ້ອນ ຫຼື ວິຊາການ ທີ່ຜູ້ຄົນອາດຈະບໍ່ຮູ້ຈັກ.
- ໃຊ້ຄໍາທີ່ໝູ່ເພື່ອນສາມາດເຂົ້າໃຈໄດ້.

- **ແທນທີ່ຈະໃຊ້ "ການປ່ອຍຄາບອນ", ໃຫ້ໃຊ້ "ມົນລະພິດຈາກລົດ ແລະ ໂຮງງານ".**

# ເຕັກນິກການຖ່າຍວິດີໂອທີ່ດີ

4

**ເຣັດໃຫ້ມີສິ່ງທີ່ສົນໃຈໃນສາຍຕາ**

- ໃຊ້ການຕັດຕໍ່ວິດີໂອທີ່ໄວ ແລະ ໃຊ້ຂໍ້ຄວາມທີ່ຊ່ວຍເນັ້ນຈຸດສຳຄັນ.
- ເພີ່ມກາບຟິກ ແລະ ພາບເໜັງຕິງທີ່ມີຄວາມເຄື່ອນໄຫວໄດ້ງ່າຍ.

(ແຫລ່ງຂໍ້ມູນເຊັ່ນ Pexels ຫຼື Pixabay ມີຮູບພາບຄຸນນະພາບສູງ.)

**ສະແດງຜົນກ່ອນ ແລະ ຫລັງ**
**(ຫາດທີ່ສະອາດ ທຽບກັບຫາດທີ່ເປື້ອນສົກກະປົກ).**




*Credit: @BeSmart*

# ເຕັກນິກການຖ່າຍວິດີໂອທີ່ດີ

5

**ໃສ່ຂໍ້ຄວາມບັນຍາຍ**
**ແລະ ເພີ່ມດົນຕີໃສ່**

- ຄົນຈຳນວນຫຼາຍເບິ່ງວິດີໂອໂດຍບໍ່ໄດ້ເປີດສຽງ. ຂໍ້ຄວາມບັນຍາຍ ຫຼື ຄຳບັນຍາຍຊ່ວຍໃຫ້ຂໍ້ເພີ່ມຄວາມເຂົ້າໃຈໃນຂໍ້ຄວາມທີ່ເຈົ້າຢາກສື່ຫຼາຍຂຶ້ນ

- ໃຊ້ດົນຕຣີເພື່ອກຳນົດຄວາມຮູ້ສຶກໃນວິດີໂອ.




*Credit: @Greenmarketeco*

# ເຕັກນິກການຖ່າຍວິດີໂອທີ່ດີ

6

ເຕັກນິກການຖ່າຍວິດີໂອທີ່ດີ





Credit: @ekienergyenking

- ຈົບລົງດ້ວຍຄຳເຊີນ ຫຼື ບອກໃຫ້ລົງມື້ເຮັດ:
- "ບອກເຮົາແດ່ວ່າເຄັດລັບການປົກປ້ອງສິ່ງແວດລ້ອມທີ່ເຈົ້າມັກແມ່ນແນວໃດ!"
- "ມາຮ່ວມກັນຫລຸດຜ່ອນຜົນກະທົບມົນລະພິດຈາກພລາສະຕິກນຳກັນ!"

- **ຈົບດ້ວຍຂໍ້ຄວາມໃນແງ່ບວກ. ສະແດງໃຫ້ເຫັນວ່າ ການກະທຳເລັກໆນ້ອຍໆກໍ່ສາມາດສ້າງຄວາມປ່ຽນແປງທີ່ແຕກຕ່າງໄດ້.**

# ເຕັກນິກການຖ່າຍວິດີໂອທີ່ດີ







## ຄົນເຮົາມັກເລື່ອງເລົ່າ!

ແບ່ງປັນປະສົບການສ່ວນຕົວ, ຄວາມທ້າທາຍທາງດ້ານສິ່ງແວດລ້ອມໃນທ້ອງຖິ່ນ, ຫລື ຄວາມສຳເລັດທີ່ເກີດຈາກການປົກປ້ອງສະພາບອາກາດ.

ນີ້ຊ່ວຍໃຫ້ຜູ້ເບິ່ງມີຄວາມຜູກພັນທາງດ້ານຄວາມຮູ້ສຶກກັບບັນຫານັ້ນໆ.





# ຂອບໃຈ!